# ກົດໝາຍວ່າດ້ວຍ ການສືບທອດມູນມໍລະດົກ










### ມາດຕາ 12. ການແບ່ງປັນມູນມໍລະດົກລະຫວ່າງຜົວ ຫລື ເມັຍທີ່ຍັງມີຊີວິດຢູ່ ແລະ ລູກ

- ໃນກໍລະນີທີ່ຜົວ ຫລື ເມັຍຫາກໄດ້ເສຍຊີວິດໄປ ໂດຍໄດ້ປະເມັຍ ຫລື ຜົວ ແລະ ລູກໄວ້ ກໍແມ່ນລູກເປັນຜູ້ມີສິດຮັບມູນມໍລະດົກທີ່ເປັນຊັບເດີມຂອງຜູ້ເສຍຊີວິດສາມສ່ວນສີ່ ແລະ ອີກໜຶ່ງສ່ວນສີ່ ແມ່ນ ເມັຍ ຫລື ຜົວທີ່ຍັງມີຊີວິດຢູ່ ເປັນຜູ້ຮັບ.
- ສ່ວນສິນສົມສ້າງນັ້ນໃຫ້ແບ່ງປັນເຄິ່ງ ຄື ເຄິ່ງໜຶ່ງໃຫ້ເມັຍ ຫລື ຜົວທີ່ຍັງມີຊີວິດຢູ່ ແລະ ອີກເຄິ່ງໜຶ່ງນັ້ນໃຫ້ແບ່ງປັນແກ່ພວກລູກ ເປັນພູດສະເໝີກັນ.
- ເມັຍ ຫລື ຜົວທີ່ຍັງມີຊີວິດຢູ່ນັ້ນ ມີສິດຄຸ້ມຄອງຊັບທີ່ຕົກທອດເປັນຂອງລູກທີ່ຍັງບໍ່ທັນເຖິງກະສຽນອາຍຸ.

### ມາດຕາ 13. ການແບ່ງປັນມູນມໍລະດົກລະຫວ່າງຜົວ ຫລື ເມຍທີ່ຍັງມີຊີວິດຢູ່ ແລະ ຍາດສາຍຕັ້ງ

ໃນກໍລະນີທີ່ຜົວ ຫລື ເມັຍທີ່ບໍ່ມີລູກ ຫາກໄດ້ເສຍຊີວິດໄປຍັງເຫລືອແຕ່ເມັຍ ຫລື ຜົວ ແລະ ຍາດສາຍຕັ້ງ ການແບ່ງປັນມູນມໍລະດົກໃຫ້ປະຕິບັດ ດັ່ງນີ້:

- ເມັຍ ຫລື ຜົວທີ່ຍັງມີຊີວິດ ຈະໄດ້ຮັບສ່ວນແບ່ງປັນ ໜຶ່ງສ່ວນສາມຂອງຊັບເດີມຂອງຜູ້ເສຍຊີວິດ ແລະ ອີກສອງສ່ວນສາມນັ້ນ ໃຫ້ແບ່ງປັນແກ່ຍາດສາຍຕັ້ງເປັນພູດສະເໝີກັນ;
- ເມັຍ ຫລື ຜົວທີ່ຍັງມີຊີວິດຢູ່ນັ້ນ ຈະໄດ້ຮັບສິນສົມສ້າງ ທີ່ເປັນພູດຂອງຜູ້ເສຍຊີວິດທັງໝົດ.



ຊີດເຊ - ລາວ
ສຳນັກງານຕັ້ງຢູ່ບ້ານ ສະພັງໝໍ້, ເຮືອນເລກທີ 244 ໜ່ວຍ 16,
ເມືອງ ໄຊເສດຖາ, ນະຄອນຫລວງວຽງຈັນ. ເບີໂທ: 021453995.
ແຟັກ: 021453995, ຕູ້ໄປສະນີ 2795, ອີເມວ: cidseinf@cidselao.org.

ອອກແບບໂດຍ: ແສງເພັດ ວົງພະຈັນ
Graphic designer: Mr. Sengphet VONGPHACHANH
856-20 22004272; 02056003532

# ກົດໝາຍວ່າດ້ວຍ ການສືບທອດມູນມໍລະດົກ



2







## ມາດຕາ 14. ການແບ່ງປັນມູນມໍຣະດົກລະຫວ່າງຍາດສາຍຂວາງ

- ຖ້າວ່າຜູ້ເສຍຊີວິດຫາກບໍ່ມີລູກ ແລະ ບໍ່ມີຍາດສາຍຕັ້ງ ແຕ່ຫາກຍັງມີຜົວ ຫລື ເມັຍນັ້ນ ຍາດສາຍຂວາງ ຕາມລຳດັບໃກ້ຊິດຂອງຜູ້ເສຍຊີວິດ ຈະໄດ້ຮັບມູນມໍລະດົກທີ່ເປັນຊັບເດີມຂອງຜູ້ເສຍຊີວິດຢ່າງ ແຕ່ເຄິ່ງໜຶ່ງ ເທົ່ານັ້ນ, ສ່ວນອີກເຄິ່ງໜຶ່ງ ແລະ ສິນສົມສ້າງທັງໝົດນັ້ນ ຈະຕົກເປັນ ຂອງເມັຍ ຫລື ຜົວທີ່ຍັງມີຊີວິດຢູ່. ການແບ່ງປັນມູນມໍລະດົກລະຫວ່າງຍາດສາຍຂວາງນັ້ນ ໃຫ້ແບ່ງປັນເປັນສ່ວນສະເໝີກັນ.

## ມາດຕາ 15. ການແບ່ງປັນມູນມໍຣະດົກລະຫວ່າງພວກລູກຂອງຜູ້ເສຍຊີວິດ

ການແບ່ງປັນມູນມໍລະດົກ ລະຫວ່າງພວກລູກຂອງຜູ້ເສຍຊີວິດ ໃຫ້ປະຕິບັດ ດັ່ງນີ້:

- ຖ້າວ່າຜູ້ເສຍຊີວິດຫາກມີແຕ່ລູກຄິງເທົ່ານັ້ນ ມູນມໍລະດົກທັງໝົດທີ່ເປັນສິນສົມສ້າງ ແລະ ຊັບເດີມ ທີ່ຕົກທອດແກ່ພວກເຂົາ ກໍໃຫ້ແບ່ງປັນເປັນສ່ວນສະເໝີກັນເວັ້ນເສຍແຕ່ຊັບເດີມຂອງຜູ້ເສຍຊີວິດທີ່ໄດ້ກຳນົດໄວ້ໃນ ມາດຕາ 12 ຂອງກົດໝາຍສະບັບນີ້;
- ຖ້າວ່າຜູ້ເສຍຊີວິດຫາກມີລູກຄິງ, ລູກລ້ຽງ ແລະ ລູກນ້າ ມູນມໍລະດົກທີ່ເປັນສ່ວນສິນສົມສ້າງຂອງຜູ້ກ່ຽວ ໃຫ້ແບ່ງປັນເປັນສ່ວນສະເໝີກັນຕາມຂໍ້ 1 ເທິງນີ້;
- ລູກລ້ຽງ ມີສິດໄດ້ຮັບສ່ວນທີ່ເປັນຊັບເດີມຂອງຜູ້ເສຍຊີວິດຄືກັນກັບລູກຄິງ, ສຳລັບລູກນ້າບໍ່ມີສິດໄດ້ຮັບສ່ວນທີ່ເປັນຊັບເດີມຂອງພໍ່ນ້າ ຫລື ແມ່ນ້າ ທີ່ເສຍຊີວິດ;
- ລູກລ້ຽງ ບໍ່ມີສິດສືບທອດມູນມໍລະດົກ ຂອງຜູ້ເປັນພໍ່ແມ່ເດີມຂອງຕົນອີກ ເວັ້ນເສຍແຕ່ມີພິໄນກຳຈາກພໍ່ແມ່ເດີມມອບໃຫ້ຕົນເທົ່ານັ້ນ;
- ສຳລັບລູກຄິງ, ລູກລ້ຽງ, ລູກນ້າ ທີ່ໄດ້ລ້ຽງດູ, ບົວລະບັດພໍ່ແມ່ຈົນຮອດວາລະເສຍຊີວິດ ແລະ ມີຖານະທີ່ຫຍຸ້ງຍາກ ກໍຈະໄດ້ຮັບສ່ວນແບ່ງມູນມໍລະດົກຂອງຜູ້ເສຍຊີວິດຫລາຍກວ່າຜູ້ສືບທອດຄົນອື່ນທີ່ສຸດ.



ຊີດເຊ-ລາວ
ສຳນັກງານຕັ້ງຢູ່ບ້ານ: ສະພັງໝໍ້, ເຮືອນເລກທີ: 244 ໜ່ວຍ: 16.
ເມືອງ: ໄຊເສດຖາ, ນະຄອນຫຼວງວຽງຈັນ, ເບີໂທ: 021453995.
ແຟັກ: 021453995, ຕູ້ໄປສະນີ: 2795, ອີເມວ: cidseinf@cidselao.org

ອອກແບບໂດຍ: ແສງເພັດ ວົງພະຈັນ
Graphic designer: Mr Sengphet VONGPHACHANH
856-20 22004272; 02056003532